ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.
ຫ້ອງການ

ເລກທີ 264 /ຫກ.
ນະຄອນຫຼວງວຽງຈັນ ວັນທີ 14 ກຸມພາ 2025

# ໜັງສືແຈ້ງເຊີນເຂົ້າຮ່ວມການປະມູນ

ເຖິງ:....................................................

- ອີງຕາມ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນ ຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
- ອີງຕາມ ແຈ້ງແຜນງົບປະມານ ປະຈຳປີ 2025 ຂອງສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ສະບັບເລກທີ 4711/ກງ, ລົງວັນທີ 25 ທັນວາ 2024.

1. ຫ້ອງການ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ໄດ້ຮັບອະນຸມັດງົບປະມານແຫ່ງລັດ ປະຈຳປີ 2025 ເພື່ອດຳເນີນການປະມູນຈັດຊື້-ຈັດຈ້າງ ປະຈຳປີ **2025** ໂຄງການຈັດຊື້ເຄື່ອງໃຊ້ຫ້ອງການ ໃຫ້ແກ່ວຽກງານບໍລິຫານຂອງ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.
2. ຂໍເຊີນບັນດາບໍລິສັດ/ຮ້ານຄ້າ, ຂາຍເຄື່ອງໃຊ້ຫ້ອງການ ທີ່ມີຄວາມສົນໃຈ ແລະ ມີຄຸນວຸດທິທີ່ເໝາະສົມເຂົ້າຮ່ວມຍື່ນຊອງປະມູນແບບເປີດກວ້າງ ຂອງສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ປະຈຳປີ 2025 ກຳນົດສົ່ງມອບສິນຄ້າແມ່ນ **21** ວັນ(ພາຍຫຼັງເຊັນສັນຍາ).
3. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນແບບເປີດກວ້າງ ຕາມທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 477/ກງ, ລົງວັນທີ 13 ກຸມພາ 2019.
4. ຊອງປະມູນຕ້ອງສົ່ງກ່ອນເວລາ **09:00** ໂມງ ຂອງວັນທີ **10** ມີນາ 2025 ທີ່ ຫ້ອງການ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ **09:30**ໂມງ ຂອງວັນທີ **10** ມີນາ 2025 ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈ.
5. ສະຖານທີ່ຫ້ອງປະຊຸມຊັ້ນ II ຕຶກຫ້ອງການ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ເບີໂທຕິດຕໍ່ 020 55053102(ນ. ລຸນນີ), 020 55775959(ທ. ຄອນສະຫວັນ)
6. ທຸກຊອງປະມູນຕ້ອງໄດ້ປະກອບມີການຄ້ຳປະກັນການປະມູນດ້ວຍເງິນສົດ, ເງິນແຊັກ ຫຼື ໜັງສືຄ້ຳປະກັນອອກໂດຍທະນາຄານ ບໍ່ໃຫ້ຫຼຸດ 2% ຂອງມູນຄ່າປະມູນມາພ້ອມ.

ເຈົ້າ ພາບ ຫົວໜ້າຫ້ອງການ

ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ຫ້ອງການ

ບຸນໜາ ສີຫາລາດ

ສະແກນດ້ວຍ CamScanner